# ຄຳແນະນຳ ຕໍ່ ພໍ່ແມ່/ຜູ້ດູແລ ກ່ຽວກັບການກັບມາຮຽນຄືນຢູ່ໃນໂຮງຮຽນຫຼັງຈາກການປິດ ເນື່ອງຈາກມີກໍລະນີທີ່ໄດ້ຮັບການຢັ້ງຢືນຂອງ COVID-19

First date school was non-operational
ວັນ ທຳອິດ ທີ່ໂຮງຮຽນບໍ່ໄດ້ເປີດດຳເນີນການ

Final date school was non-operational, if more than one day
ວັນສຸດທ້າຍທີ່ໂຮງຮຽນບໍ່ເຮັດວຽກ, ຖ້າຫຼາຍກວ່ານຶ່ງມື້

ໂຮງຮຽນຂອງພວກເຮົາແມ່ນບໍ່ໄດ້ດຳເນີນການໃນວັນທີທີ່ສະແດງຢູ່ຂ້າງເທິງເນື່ອງຈາກກໍລະນີທີ່ໄດ້ຮັບການຢັ້ງຢືນຂອງ COVID-19.

ໃນລະຫວ່າງການປິດໂຮງຮຽນໄດ້ຖືກທຳຄວາມສະອາດຢ່າງລະອຽດແລະ ຈະກັບມາຮຽນຄືນອີກໃນວັນທີຕໍ່ໄປນີ້:

Date for resumption of on-site learning
ວັນທີ ສຳລັບການກັບມາຮຽນຄືນທີ່ໂຮງຮຽນ

ກະຊວງສຶກສາ ຣັດ NSW ແລະ ກົມ ອະນາໄມ ຣັດ NSW ໄດ້ເຮັດວຽກຢ່າງໃກ້ຊິດເພື່ອຮັບປະກັນສຸຂະພາບແລະຄວາມປອດໄພຂອງນັກຮຽນແລະພະນັກງານທຸກຄົນ. ວຽກງານນີ້ລວມເຖິງການລະບຸການຕິດຕໍ່ໃກ້ຊິດກັບກໍລະນີທີ່ໄດ້ຮັບການຢັ້ງຢືນແລະການຕິດຕໍ່ພົວພັນກັບພວກເຂົາໂດຍກົງກ່ຽວກັບຂໍ້ກຳນົດໃນການແຍກຕົວເອງ.

ນັກຮຽນແລະພະນັກງານທີ່ຖືກລະບຸວ່າເປັນຜູ້ຕິດຕໍ່ໃກ້ຊິດໄດ້ຮັບແຈ້ງການແລະຮຽກຮ້ອງໃຫ້ແຍກຕົວເອງໃນໄລຍະເວລາຕາມທີ່ກຳນົດໄວ້ ແລະ ບໍ່ຕ້ອງກັບຄືນໄປໂຮງຮຽນຈົນກວ່າເວລານີ້ໄດ້ຜ່ານໄປ.

ໂຮງຮຽນຈະມີຄວາມລະມັດລະວັງໃນການປະຕິບັດລະບຽບການຄວບຄຸມການຕິດເຊື້ອ, ລວມທັງການທຳຄວາມສະອາດປະຈຳວັນຕາມຫຼັກການປົກກະຕິ, ການສົ່ງເສີມນິໄສສຸຂະອະນາໄມທີ່ດີແລະຈະສືບຕໍ່ການມີນ້ຳຢາລ້າງມືແບບຂ້າເຊື້ອໃຫ້ພະນັກງານແລະນັກຮຽນໃຊ້ໃນເວລາຮຽນ.

ຄວາມປອດໄພແລະຄວາມເປັນຢູ່ທີ່ດີຂອງພະນັກງານແລະນັກຮຽນຂອງພວກເຮົາແມ່ນມີຄວາມສຳຄັນທີ່ສຸດຕໍ່ພວກເຮົາຕະຫຼອດເວລາ. ພວກເຮົາຈະສືບຕໍ່ເຮັດວຽກຢ່າງໃກ້ຊິດກັບກົມອະນາໄມ NSW ເພື່ອຮັບປະ ກັນວ່າ ຄຳແນະນຳດ້ານສຸຂະພາບທີ່ຈຳເປັນທັງໝົດ ແມ່ນຖືກປະຕິບັດ.

ສຳລັບຂໍ້ມູນເພີ້ມເຕີມ ລວມທັງຂໍ້ມູນກ່ຽວກັບCOVID-19 ທີ່ໄດ້ຖືກແປແລ້ວມີໄວ້ໃຫ້ທີ່ NSW Health website.

ຂໍ້ມູນເພີ້ມເຕີມກ່ຽວກັບການໂຕ້ຕອບຂອງກະຊວງສຶກສາ ຣັດ NSW ຕໍ່ COVID-19 ມີໄວ້ໃຫ້ທີ່ https://education.nsw.gov.au/covid-19

## ບໍລິການ ນາຍພາສາ ທາງໂທລະສັບ

ຖ້າທ່ານຕ້ອງການຂໍ້ມູນເພີ້ມເຕີມ ກະລຸນາໂທຫາທ່ານຄູໃຫຍ່ຂອງໂຮງຮຽນທ່ານ. ຖ້າ ທ່ານຕ້ອງການນາຍພາສາເພື່ອຊ່ວຍໃນການສອບຖາມຂອງທ່ານ, ກະລຸນາໂທຫາ ບໍລິ ການ ນາຍພາສາທາງໂທລະສັບ ຕາມໝາຍເລກ 131 450 ແລະຂໍເອີ້ນາຍພາສາລາວ. ບອກຜູ້ຮັບສາຍໝາຍເລກທີ່ທ່ານຢາກໂທຫາ ແລ້ວຜູ້ຮັບສາຍຈະຊອກເອີ້ນາຍພາສາຕາມສາຍເພື່ອຊ່ວຍທ່ານໃນການສົນທະນານັ້ນ. ທ່ານຈະບໍ່ຖືກຄິດຄ່າໃດໆສຳລັບບໍລິການ ນີ້.